ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------000---------------

ກະຊວງສຶກສາທິການ ແລະ ກິລາ
ຄະນະກຳມາທິການແຫ່ງຊາດ
ເພື່ອການພັດທະນາຊັບພະຍາກອນມະນຸດ

ເລກທີ 028 ---ລປ /ສສກ

ນະຄອນຫຼວງວຽງຈັນ, ວັນທີ 06 JAN 2017

# ມະຕິ

## ກອງປະຊຸມຄັ້ງທີ V ຂອງຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ

ກອງປະຊຸມຄັ້ງທີ V ຂອງຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ (ຄຊພຊ) ໄດ້ໄຂຂຶ້ນໃນວັນທີ 27 ທັນວາ 2016 ທີ່ໂຮງແຮມລ້ານຊ້າງ, ນະຄອນຫຼວງວຽງຈັນ ພາຍໃຕ້ການເປັນປະທານຂອງ ທ່ານ ນາງ ແສງເດືອນ ຫຼ້າຈັນທະບູນ, ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ, ປະທານຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ ໂດຍມີບັນດາທ່ານກຳມະການຂອງຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ, ຄະນະປະ ສານງານຂອງບັນດາກະຊວງ, ອົງການທຽບເທົ່າ, ບັນດາທ່ານຮອງເຈົ້າແຂວງ, ຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ ແລະ ຄະນະຮັບຜິດຊອບກອງປະຊຸມເຂົ້າຮ່ວມ ລວມທັງໝົດ 87 ທ່ານ (ຍິງ 25 ທ່ານ). ກອງປະຊຸມໄດ້ຄົ້ນຄວ້າກ່ຽວກັບ (1). ຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ ແລະ ຄະນະປະສານງານຊຸດໃໝ່ ພ້ອມທັງພາລະບົດບາດ, ສິດ ແລະ ໜ້າທີ່ຂອງຄະນະດັ່ງກ່າວ ແລະ ຄົ້ນຄ້ວາການແຕ່ງຕັ້ງຄະນະກຳມະການພັດທະນາຊັບພະຍາກອນມະນຸດ ແລະ ກອງເລຂາ ຊ່ວຍວຽກ ແລະ ປະສານງານ ຂັ້ນສູນກາງ ແລະ ທ້ອງຖິ່ນ, (2). ຮັບຟັງການນຳສະເໜີ ຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດຮອດປີ 2025 ໂດຍຫຍໍ້ ແລະ ຄວາມຄືບໜ້າຂອງການກະກຽມການຈັດຕັ້ງປະຕິບັດຍຸດທະສາດ ແລະ ແຜນໃນຕໍ່ໜ້າ, (3). ຮັບຟັງການສະເໜີຂົງເຂດວິຊາຮຽນພາຍໃນປະເທດ ແລະ ຕ່າງປະເທດຂອງວຽກງານການສຶກສາຊັ້ນສູງ, ອາຊີວະສຶກສາ ແລະ ຄວາມຕ້ອງການຂົງເຂດວິຊາຮຽນ ຮອດປີ 2020 ແລະ 2025, (4). ຮັບຟັງການສະເໜີແນະນຳການສ້າງແຜນຄວາມຕ້ອງການບຸກຄະລາກອນ ແລະ ກຳລັງແຮງງານ ຂອງຂະແໜງການ ແລະ ທ້ອງຖິ່ນ.

ຜ່ານການປຶກສາຫາລື, ຄົ້ນຄວ້າ, ພິຈາລະນາ, ປະກອບຄຳຄິດ, ຄຳເຫັນຢ່າງຕັ້ງໜ້າ, ກົງໄປກົງມາ ແລະ ສ້າງສັນ ຂອງບັນດາຜູ້ແທນ, ກອງປະຊຸມໄດ້ມີຄວາມເປັນເອກະພາບກັນຮັບຮອງເອົາເປັນມະຕິກອງປະຊຸມ ດັ່ງນີ້:

1. ເຫັນດີສະເໜີ ຕໍ່ລັດຖະບານ ປັບປຸງເນື້ອໃນດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍ ການຈັດຕັ້ງ ແລະ ເຄື່ອນໄຫວ ຂອງຄະນະກຳມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດ ສະບັບເລກທີ 315/ນຍ, ລົງວັນທີ 22 ພະຈິກ 2013 ເຊິ່ງປະກອບມີ 3 ລະດັບ:
   - ລະດັບຊາດ ແມ່ນຄະນະກຳມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດ ປະກອບດ້ວຍບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະ ຮອງເຈົ້າແຂວງ/ຮອງເຈົ້າຄອງນະຄອນຫຼວງ ຜູ້ຊີ້ນຳວຽກງານວັດທະນະທຳສັງຄົມ ໂດຍຖືເອົາກະຊວງສຶກສາທິການ ແລະ ກິລາ ເປັນຈຸດໃຈກາງປະສານງານທັງເປັນກອງເລຂາ ແຕ່ງຕັ້ງໂດຍນາຍົກລັດຖະມົນຕີ;
   - ລະດັບກະຊວງ, ອົງການທຽບເທົ່າກະຊວງ ໃຫ້ແຕ່ງຕັ້ງຄະນະກຳມະການພັດທະນາຊັບພະຍາກອນມະນຸດ ເຊິ່ງປະກອບດ້ວຍຫົວໜ້າກົມກ່ຽວຂ້ອງ ໂດຍເອົາກົມຈັດຕັ້ງ ແລະ ພະນັກງານ ເປັນກອງເລຂາ ແຕ່ງຕັ້ງໂດຍ ທ່ານລັດຖະມົນຕີ ຫຼື ຫົວໜ້າອົງການທຽບເທົ່າ;
   - ລະດັບແຂວງ/ນະຄອນຫຼວງ ແມ່ນຄະນະກຳມະການພັດທະນາຊັບພະຍາກອນມະນຸດ ປະກອບດ້ວຍບັນດາພະແນກການ ແລະ ເມືອງຕ່າງໆ ໂດຍມີຮອງເຈົ້າເມືອງຜູ້ຊີ້ນຳວຽກງານວັດທະນະທຳ-ສັງຄົມ ແລະ ຫົວໜ້າຫ້ອງການສຶກສາທິການ ແລະ ກິລາເມືອງ ໂດຍຖືເອົາພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ເປັນກອງເລຂາ ເຊິ່ງແຕ່ງຕັ້ງໂດຍ ທ່ານເຈົ້າແຂວງ/ເຈົ້າຄອງນະຄອນຫຼວງ;
2. ກອງປະຊຸມເຫັນດີ ເປັນເອກະພາບສະເໜີໃຫ້ແຕ່ລະຂະແໜງການຢູ່ສູນກາງ ແລະ ທ້ອງຖິ່ນ ສືບຕໍ່ສ້າງແຜນຄວາມຕ້ອງການບຸກຄະລາກອນ ແລະ ກຳລັງແຮງງານໃນໄລຍະແຕ່ນີ້ ເຖິງປີ 2025 ແລ້ວນຳສົ່ງ ໃຫ້ກະຊວງສຶກສາທິການ ແລະ ກິລາ, ກອງເລຂາ ຄຊພຊ ກ່ອນທ້າຍເດືອນມັງກອນ 2017 (ກະຊວງສຶກສາທິການ ແລະ ກິລາ ສົ່ງຮ່າງແຜນດັ່ງກ່າວໃຫ້ທຸກພາກສ່ວນເພື່ອປະກອບຂໍ້ມູນໃສ່ໃຫ້ຄົບຖ້ວນ);
3. ໃນການຈັດຕັ້ງປະຕິບັດຍຸດທະສາດການພັດທະນາຊັບພະຍາກອນມະນຸດ ສຳລັບ ສົກປີ 2017 ມອບໃຫ້ກອງເລຂາຄະນະກຳມາທິການແຫ່ງຊາດ ເພື່ອການພັດທະນາຊັບພະຍາກອນມະນຸດປະຕິບັດ ດັ່ງນີ້:
   - 3.1 ສືບຕໍ່ເຜີຍແຜ່ຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດໃຫ້ພາກສ່ວນກ່ຽວຂ້ອງ (ສູນກາງ ແລະ ທ້ອງຖິ່ນ);
   - 3.2 ສືບຕໍ່ຮ່ວມປະສານງານກັບຄະນະກຳມະການພັດທະນາຊັບພະຍາກອນມະນຸດ ຂອງບັນດາກະຊວງ, ອົງການທຽບເທົ່າ ແລະ ແຂວງ/ນະຄອນຫຼວງ ໃນການຄິດໄລ່ງົບປະມານທີ່ບໍ່ທັນມີ ໃນແຜນປະຕິບັດງານ ປີ 2017-2025, ສ້າງລະບົບການຕິດຕາມ ແລະ ປະເມີນ

ຜົນ ແລະ ສ້າງແຜນຄວາມຕ້ອງການດ້ານບຸກຄະລາກອນ ແລະ ກຳລັງແຮງງານ ໂດຍໃຫ້ມີການສະໜອງງົບປະມານ ແລະ ພ້ອມທັງຊອກຫາແຫຼ່ງທຶນອື່ນຕື່ມ ມາຊ່ວຍເຫຼືອດ້ານວິຊາການ;

3.3 ສືບຕໍ່ປະສານງານກັບບັນດາຄູ່ຮ່ວມພັດທະນາ ທີ່ໃຫ້ການສະໜັບສະໜູນການພັດທະນາຊັບພະຍາກອນມະນຸດທັງພາຍໃນປະເທດ ແລະ ຕ່າງປະເທດ ເພື່ອຍາດແຍ່ງການສະໜັບສະໜູນດ້ານວິຊາການ ແລະ ງົບປະມານ ມາຈັດຕັ້ງປະຕິບັດຍຸດທະສາດການພັດທະນາຊັບພະຍາກອນມະນຸດແຫ່ງຊາດ ຮອດປີ 2025;

4. ກອງປະຊຸມຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດຄັ້ງທີ VI ຈະຈັດຂຶ້ນໃນ ເດືອນພະຈິກ 2017;

5. ມອບໃຫ້ບັນດາກະຊວງ, ອົງການທຽບເທົ່າ, ແຂວງ/ນະຄອນຫຼວງ, ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ, ທຸກພາກສ່ວນທີ່ກ່ຽວຂ້ອງເອົາໃຈໃສ່ຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍເນື້ອໃນມະຕິກອງປະຊຸມຄັ້ງນີ້ໃຫ້ປະກົດຜົນເປັນຈິງ ແລະ ໄດ້ຮັບຜົນດີ.

ລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ
ປະທານຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ

ກະຊວງສຶກສາທິການ ແລະ ກິລາ
ລັດຖະມົນຕີ

ນ.ແສງເດືອນ ຫຼ້າຈັນທະບູນ